**ລັດຖະບານນໍາສະເໜີທິດທາງໃນຕໍ່ໜ້າ ສໍາລັບການຟື້ນຟູຫຼັງເກີດໄພພິບັດຂອງ ສປປ ລາວ**

**ທີ່ນະຄອນຫຼວງວຽງຈັນ, 8 ເມສາ, 2019** – ອົງການຈັດຕັ້ງຂອງລັດຖະບານລາວ ແລະ ຄູ່ຮ່ວມພັດທະນາ ໄດ້ປະຊຸມກັນມື້ນີ້ ເພື່ອປຶກສາຫາລືກ່ຽວກັບທິດທາງໃນຕໍ່ໜ້າກ່ຽວກັບການສ້າງຍຸດທະສາດການຟື້ນຟູຫຼັງເກີດໄພພິບັດຫຼັງຈາກເກີດນໍ້າຖ້ວມໃນປີ 2018. ກອງປະຊຸມປຶກສາຫາລືກ່ຽວກັບການຟື້ນຟູຫຼັງເກີດໄພພິບັດຂອງ ສປປ ລາວ ໄດ້ຖືກຈັດຂຶ້ນທີ່ຫໍປະຊຸມແຫ່ງຊາດ ໂດຍສືບເນື່ອງມາຈາກສິ່ງທີ່ໄດ້ຄົ້ນພົບຈາກການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ (PDNA) ເຊິ່ງໄດ້ຈັດຕັ້ງປະຕິບັດໃນໄລຍະເດືອນກັນຍາ ຫາ ເດືອນຕຸລາ ປີ 2018 ທີ່ຜ່ານມານີ້.

ໃນລະຫວ່າງເດືອນກໍລະກົດ ຫາ ເດືອນກັນຍາ 2018, ສປປ ລາວ ໄດ້ປະສົບກັບໄພນໍ້າຖ້ວມທີ່ໂຫດຮ້າຍທີ່ສຸດໃນຮອບທົດສະວັດ ເຊິ່ງໄດ້ສົ່ງຜົນກະທົບຕໍ່ປະຊາຊົນຫຼາຍກວ່າ 600,000 ຄົນ ຢູ່ໃນ 17 ແຂວງ ແລະ ນະຄອນຫຼວງວຽງຈັນ. ຝົນທີ່ຕົກໜັກຍ້ອນພາຍຸເຂດຮ້ອນເຊີນຕິນ ແລະ ສັນເຂື່ອນເຊປຽນ-ເຊນໍ້ານ້ອຍແຕກນັ້ນ ໄດ້ສົ່ງຜົນເຮັດໃຫ້ເກີດນໍ້າຖ້ວມສຸຕາມມາຢູ່ພື້ນທີ່ກ້ອງເຂື່ອນ. ໃນເດືອນສິງຫາ, ພະຍຸເຂດຮ້ອນເບບິນກາ ກໍໄດ້ພັດຜ່ານອີກ ຈິ່ງເຮັດໃຫ້ເກີດນໍ້າຖ້ວມຂຶ້ນອີກໃນຂອບເຂດທົ່ວປະເທດ ໂດຍສະເພາະບັນດາແຂວງພາກເໜືອຂອງປະເທດ. ໄພນໍ້າຖ້ວມໄດ້ທໍາລາຍເຮືອນຊານບ້ານຊ່ອງຂອງປະຊາຊົນປະມານ 1,700 ຫຼັງ ໃນຂະນະດຽວກັນ ກໍເຮັດໃຫ້ການບໍລິການດ້ານສາທາລະນະສຸກ ແລະ ການສຶກສາ ໄດ້ຖືກຢຸດສະງັກໃນທົ່ວປະເທດ.

“ນັບແຕ່ນັ້ນເປັນຕົ້ນມາ, ລັດຖະບານແຫ່ງ ສປປ ລາວ ໂດຍຮ່ວມກັບອົງການສະຫະປະຊາຊາດ ແລະ ທະນາຄານໂລກ ພ້ອມກັບຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງທາງສັງຄົມອື່ນໆ ກໍໄດ້ເຮັດວຽກຮ່ວມກັນຢ່າງຕັ້ງໜ້າ ເພື່ອຟື້ນຟູການດໍາລົງຊີວິດ ແລະ ສ້າງຄວາມເຂັ້ມແຂງໃນການຮັບມືກັບໄພພິບັດ.” ທ່ານ ປອ. ຄໍາແພງ ໄຊສົມແພງ, ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ປະທານຄະນະກໍາມະການຄວບຄຸມ ແລະ ປ້ອງກັນໄພພິບັດແຫ່ງຊາດ, ກ່າວ.

ໂດຍການນໍາພາຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບການສະໜັບສະໜູນຈາກກະຊວງທີ່ກ່ຽວຂ້ອງ, ອົງການສະຫະປະຊາຊາດ, ທະນາຄານໂລກ ແລະ ສະຫະພາບເອີຣົບ ໄດ້ຊ່ວຍໃນການອໍານວຍຄວາມສະດວກໃນການຈັດຕັ້ງປະຕິບັດ ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ. ການປະເມີນດັ່ງກ່າວໄດ້ເຮັດສໍາເລັດພາຍໃນເວລາບໍ່ຮອດໜຶ່ງເດືອນ ແລະ ບົດສະຫຼຸບກ່ຽວກັບສິ່ງທີ່ໄດ້ຄົ້ນພົບຈາກການປະເມີນໃນຄັ້ງນີ້ ກໍໄດ້ຖືກເຜີຍແຜ່ກັບບັນດາຄູ່ຮ່ວມພັດທະນາ ຢູ່ທີ່ກອງປະຊຸມປຶກຫາລືກ່ອນກອງປະຊຸມໂຕະມົນ ໃນເດືອນພະຈິກ ປີ 2018 ແລະ ກອງປະຊຸມໂຕະມົນ ໃນເດືອນທັນວາ ປີ 2018.

ບົດລາຍງານການປະເມີນຄວາມຕ້ອງການຫຼັງເກີດໄພພິບັດດັ່ງກ່າວ ໄດ້ປະເມີນຄວາມເສຍຫາຍ ແລະ ການສູນເສຍທັງໝົດຢູ່ທີ່ 3,167 ຕື້ກີບ ປະມານ 372 ລ້ານໂດລາສະຫະລັດ ເຊິ່ງທຽບເທົ່າ 2.1 ເປີເຊັນຂອງລວມຍອດຜະລິດຕະພັນພາຍໃນ (GDP) ທີ່ຄາດຄະເນໃນປີ 2018 ຂອງປະເທດ. ຄວາມຕ້ອງການດ້ານງົບປະມານໃນການຟື້ນຟູ ຄາດວ່າຈະຢູ່ທີ່ 4,423 ຕື້ກີບ ປະມານ 520 ລ້ານໂດລາສະຫະລັດ. ນອກຈາກນີ້, ການປະເມີນດັ່ງກ່າວ ຍັງໄດ້ກໍານົດຂະແໜງການທີ່ເປັນບູລິມະສິດ ເຊິ່ງລວມມີ ການຄົມມະນາຄົມຂົນສົ່ງ, ກະສິກໍາ ແລະ ທາງນໍ້າໄຫຼຜ່ານລວມ, ພ້ອມກັບຄວາມຕ້ອງການທີ່ສໍາຄັນຂອງແຕ່ລະຂະແໜງການ. ສິ່ງທີ່ໄດ້ຄົ້ນພົບຈາກການປະເມີນໃນຄັ້ງນີ້ ຖືເປັນສ່ວນສໍາຄັນ ທີ່ຈະຊ່ວຍໃຫ້ ສປປ ລາວ ໄດ້ຮັບທຶນຊ່ວຍເຫຼືອສຸກເສີນສໍາລັບການຟື້ນຟູຫຼັງໄພພິບັດ ຈາກທາງພາຍໃນ ແລະ ຕ່າງປະເທດ. ທ່ານ ນ. ຄາຣີນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ໄດ້ກ່າວວ່າ: “ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດດັ່ງກ່າວ ໄດ້ສະໜອງຂໍ້ມູນພື້ນຖານສໍາລັບການວາງແຜນສໍາລັບການ

ຟື້ນຟູຫຼັງເກີດໄພພິບັດ. ສິ່ງທີ່ໄດ້ຄົ້ນພົບຈາກການປະເມີນນີ້ ຈະຊ່ວຍໃຫ້ພວກເຮົາ - ລັດຖະບານ ແລະ ຄູ່ຮ່ວມພັດທະນາ ສາມາດຈັດບູລິມະສິດກິດຈະກໍາສໍາລັບການຟື້ນຟູ ແລະ ການສະໜອງທຶນໃນຕໍ່ໜ້າ.”

ໃນຊ່ວງຫຼາຍໆເດືອນທີ່ຜ່ານມາ, ລັດຖະບານລາວ ຮ່ວມກັບ ສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ໄດ້ມີການລະດົມທຶນ ເພື່ອສະໜອງການຊ່ວຍເຫຼືອຊີວິດຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມ. ອົງການສະຫະປະຊາຊາດໄດ້ສ້າງແຜນຟື້ນຟູຫຼັງເກີດໄພພິບັດ ເຊິ່ງລະດົມທຶນໄດ້ 10 ລ້ານໂດລາສະຫະລັດ ພ້ອມກັນນີ້ ບັນດາຄູ່ຮ່ວມພັດທະນາ ກໍຍັງໃຫ້ຄໍາ ໝັ້ນໝາຍທີ່ຈະເພີ່ມການຊ່ວຍເຫຼືອຕື່ມອີກ. ທີ່ພັກເຊົາສຸກເສີນກໍໄດ້ຮັບການກໍ່ສ້າງຂຶ້ນສໍາລັບຜູ້ປະສົບໄພ ທີ່ເສຍເຮືອນຊານບ້ານຊ່ອງຂອງພວກເຂົາ. ນອກຈາກນີ້, ລັດຖະບານແຫ່ງ ສປປ ລາວ ກໍໄດ້ຟື້ນຟູການສະໜອງການບໍລິການຂັ້ນພື້ນຖານຕ່າງໆ, ສະໜອງອາຫານແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ສ້ອມແປງຖະໜົນຫົນທາງທັນທີທີ່ໄດ້ຮັບຄວາມເສຍຫາຍ ໂດຍໃຊ້ງົບກອງທຶນຮັກສາທາງຫຼວງແຫ່ງຊາດ. ເພື່ອສະໜອງການຊ່ວຍເຫຼືອທັນທີ ຕໍ່ກັບຂະແໜງການໂຍທາ, ທະນາຄານໂລກໄດ້ປັບໂຄງສ້າງຂອງໂຄງການຊ່ວຍເຫຼືອຂະແໜງການໂຍທາລາວ ໄລຍະທີ II to ເພື່ອສະໜອງ 4 ລ້ານໂດລາສະຫະລັດ ແກ່ຂົງເຂດທີ່ເປັນບູລິມະສິດ.

ໃນຕໍ່ໜ້າ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈະປະສານກັບພາກສ່ວນກ່ຽວຂ້ອງເພື່ອດໍາເນີນການວາງແຜນຟື້ນຟູຫຼັງເກີດໄພພິບັດ ໂດຍພາຍໃຕ້ການນໍາພາຊີ້ນໍາຂອງຄະນະກໍາມະການຄວບຄຸມ ແລະ ປ້ອງກັນໄພພິບັດແຫ່ງຊາດ ໂດຍມີຈຸດປະສົງເພື່ອຟື້ນຟູ ແລະ ປັບປຸງການເຂົ້າເຖິງການບໍລິການສັງຄົມຂັ້ນພື້ນຖານ ແລະ ການມີວຽກເຮັດງານທໍາ ແລະ ການຍົກລະດັບຄວາມສາມາດໃນການຮັບມືກັບໄພນໍ້າຖ້ວມ ແລະ ໄພພິບັດທາງທໍາມະຊາດອື່ນໆ. ຫຼັກການທີ່ເປັນຍຸດທະສາດ ສໍາລັບການວາງແຜນການຟື້ນຟູຫຼັງເກີດໄພພິບັດ ປະກອບມີ:

- ການຟື້ນຟູການດໍາລົງຊີວິດຂອງປະຊາຊົນໂດຍໄວ ແລະ ການຟື້ນຟູເສດຖະກິດໃນທ້ອງຖິ່ນ ໂດຍສຸມໃສ່ກຸ່ມຄົນທີ່ມີຄວາມສ່ຽງທີ່ສຸດ ແລະ ດ້ອຍໂອກາດທີ່ສຸດ;
- ການຮັກສາໝາກຜົນຂອງການພັດທະນາ;
- ການຟື້ນຟູຕ້ອງມີການປະສານງານທີ່ສອດຄ່ອງກັນ;
- ແລະ ການສ້າງຄືນໃຫ້ດີກວ່າເກົ່າ.

ບູລິມະສິດ ແມ່ນການກະກຽມຮັບມືກັບໄພພິບັດ ຢູ່ໃນຂະແໜງການພື້ນຖານໂຄງລ່າງ, ກະສິກໍາ, ສາທາລະນະສຸກ ແລະ ການສຶກສາ ໂດຍສຸມໃສ່ແຂວງອັດຕະປື, ຫົວພັນ, ອຸດົມໄຊ ແລະ ຄໍາມ່ວນ ແລະ ການທົບທວນຄວາມປອດໄພຂອງເຂື່ອນ. ລັດຖະບານໄດ້ຈັດສັນງົບປະມານຈໍານວນ 500 ຕື້ກີບ ສໍາລັບການຟື້ນຟູຫຼັງເກີດໄພພິບັດ ຈາກງົບປະມານປີ 2019. ການດໍາເນີນງານສໍາລັບການຟື້ນຟູຫຼັງເກີດໄພພິບັດ ແມ່ນຈະໄດ້ຖືກລະບຸໃນແຜນການຟື້ນຟູຂອງກະຊວງ ແລະ ມີຄວາມສອດຄ່ອງກັບກົນໄກການວາງແຜນລະດັບຊາດ ເຊິ່ງລວມທັງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ບົດລາຍງານການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ ສາມາດດາວໂລດໄດ້ທີ່ນີ້.